# ບາງເນື້ອໃນກ່ຽວກັບການສະໜັບສະໜູນຂອງຍີ່ປຸ່ນ ຕໍ່ກັບການພັດທະນາເສດຖະກິດລາວ

ໂດຍ: ແສງອາລຸນ ຄອງຫຼ້າຫຼຽນ

ການພົວພັນຮ່ວມມື ລາວ-ຍີ່ປຸ່ນ ແມ່ນການເຊື່ອມໂຍງເຊິ່ງກັນ ແລະ ກັນ ຕະຫຼອດໄລຍະ 7 ທົດສະວັດ ແມ່ນມີຄວາມໝາຍ ສຳຄັນ ອັນແໜ້ນແຟ້ນ. ເຊິ່ງໄດ້ສ້າງສາຍພົວພັນການທູດຮ່ວມກັນມາແຕ່ ວັນທີ 05 ມີນາ 1955 ຈົນເຖິງປະຈຸບັນ ທັງສອງປະເທດໄດ້ມີການພົວພັນຄູ່ຮ່ວມມືຮອບດ້ານໂດຍມີການຢ້ຽມຢາມໄປມາຫາສູ່ລະດັບການນຳຂັ້ນສູງ, ລະດັບວິຊາການ. ຍີ່ປຸ່ນໄດ້ສົ່ງ ນັກວິຊາການ ຊ່ຽວຊານດ້ານຕ່າງໆ ມາປະຈຳຢູ່ປະເທດລາວ ແລະ ປະຊາຊົນທັງສອງຊາດກໍໄດ້ໄປມາຫາສູ່ກັນເປັນເວລາຍາວນານ ກາຍມາເປັນຄູ່ຮ່ວມຍຸດທະສາດ. ລັດຖະບານ ແລະ ປະຊາຊົນຍີ່ປຸ່ນໄດ້ໃຫ້ການຊ່ວຍເຫຼືອແກ່ປະເທດລາວຕະຫຼອດມາ ເຊັ່ນ: ການພັດທະນາພື້ນຖານ ໂຄງລ່າງເສດຖະກິດ-ສັງຄົມ, ກະສິກຳແລະປ່າໄມ້, ການພັດທະນາລະບົບກົດໝາຍ, ການສຶກສາ ແລະ ຊັບພະຍາກອນມະນຸດ. ໃນຊ່ວງໄລຍະປັດຈຸບັນນີ້ ການຮ່ວມມືໄດ້ຂະຫຍາຍໄປສູ່ຂະແໜງໃໝ່ໆ ເຊັ່ນພະລັງງານສີອຂຽວ, ດິຈິຕອນ ແລະ ການຮັບມືການປ່ຽນແປງດິນຟ້າອາກາດ.

## 1.ໄລຍະຕົ້ນ ຊ່ວງປີ 1950-1980: ການສ້າງຕັ້ງສາຍສຳພັນ ແລະ ການວາງແຜນພື້ນຖານ

ໃນຊ່ວງປີ 1950-1960 ຍີ່ປຸ່ນກຳລັງຟື້ນຟູປະເທດຫຼັງສົງຄາມ ແລະ ໄດ້ເລີ່ມການຮ່ວມມືກັບບັນດາປະເທດອາຊຽນເພື່ອຟື້ນຟູຄວາມໄວ້ວາງໃຈໃນຊ່ວງນັ້ນເສດຖະກິດຂອງປະເທດຍີ່ປຸ່ນຂະຫຍາຍໂຕສູງ ເຮັດໃຫ້ມີຄວາມຕ້ອງການຂະຫຍາຍຕະຫຼາດໃນການດຳເນີນທຸລະກິດກັບປະເທດຕ່າງໆ ໃນພູມມິພາກອາຊີຕາເວັນອອກສ່ຽງໃຕ້ໂດຍໄດ້ລິເລີ່ມດຳເນີນນະໂຍບາຍເອີ້ນວ່າ "ການທູດເສດຖະກິດ" (Keizai Gaiko ຫຼື Economic Diplomacy) ເຊິ່ງເນັ້ນການສົ່ງເສີມການຄ້າ ແລະ ການຮ່ວມມື ທາງເສດຖະກິດກັບພູມິພາກ ແລະ ຍັງເພີ່ມນະໂຍບາຍເອີ້ນວ່າ "ການທູດເນັ້ນອາຊີ" (Asia-centered diplomacy). ເລີ່ມແຕ່ທ້າຍປີ 1950 ຫາຕົ້ນປີ 1970 ຜູ້ນຳຂອງທັງສອງປະເທດລາວ-ຍີ່ປຸ່ນ ໄດ້ເດີນທາງໄປມາຫາສູ່ແລກປ່ຽນກັນຢ່າງສະໝ່ຳສະເໝີ ນາຍົກລັດຖະມົນຕີ ທ່ານ ກິຊິ ໂນບຸສິເກະ (KISHI Nobusuk, 岸 信介) ໄດ້ເດີນທາງມາຢ້ຽມຢາມປະເທດລາວຢ່າງເປັນທາງການໃນເດືອນພຶດສະພາ 1957. ຕໍ່ມາປະເທດລາວໄດ້ດຳເນີນນະໂຍບາຍເລືອກຍົກເວັ້ນສິດຂອງຕົນໃນການຮຽກຮ້ອງການຊົດເຊີຍທາງດ້ານການເງິນໂດຍກົງຕໍ່ຄວາມເສຍຫາຍຈາກສົງຄາມນຳຍີ່ປຸ່ນ. ຫຼັງຈາກນັ້ນ ການຊົດເຊີຍຍີ່ປຸ່ນປ່ຽນເປັນ "ການຊ່ວຍເຫຼືອດ້ານເສດຖະກິດ ແລະ ດ້ານເຕັກນິກ". ໃນປີ 1967 ທ່ານ ຊະໂຕ ເອຊະກຸ (SATO Eisaku, 佐藤 栄作) ໄດ້ມາຢ້ຽມຢາມປະເທດລາວເຊິ່ງໃນຊ່ວງນັ້ນພື້ນຖານການພັດຖະນາເສດຖະກິດປະເທດລາວຍັງ ອ່ອນນ້ອຍ.ການຮ່ວມມືໃນຊ່ວງນັ້ນມີການຝຶກອົບຮົມ, ການສົ່ງຊ່ຽວຊານມາ



ຮູບ ເຂື່ອນນ້ຳງື່ມ ໄດ້ຮັບການສະໜັບສະໜູນຂະແໜງພະລັງງານ ນັບແຕ່ ປີ 1966, ສ້າງສຳເລັດ ປີ 1971

ຊ່ວຍພັດທະນາດ້ານເຕັກນິກຕ່າງໆ ການກຽມສ້າງໂຄງລ່າງພື້ນຖານ, ການສົ່ງເສີມດ້ານກະສິກຳ ແລະ ການສຶກສາ.

❖ **ຕົວຢ່າງໂຄງການສຳຄັນໃນໄລຍະນັ້ນ**

ໂຄງການສ້າງເຂື່ອນນ້ຳງື່ມໜຶ່ງ: ເຊິ່ງໄດ້ເລີ່ມການປຶກສາຫາລື ການວາງແຜນໃນ ປີ 1957 ໂດຍໄດ້ພົບປະກັນລະຫວ່າງ ທ່ານ ສຸພານຸວົງ ແລະ ວິສະວະກອນຍີ່ປຸ່ນ ທ່ານ ຄຸໂບະຕະ ຢຸຕະກະ (KUBOTA Yutaka, 久保田 豊) ທີ່ນະຄອນຫຼວງວຽງຈັນ. ໃນຊ່ວງນັ້ນສົງຄາມໃນພາກພື້ນຍັງດຳເນີນ ເຖິງວ່າໄດ້ມີຂໍ້ຂັດແຍ່ງໃນພາກພື້ນ, ໂຄງການດັ່ງກ່າວໄດ້ມີຄວາມສຳຄັນຫຼາຍເຮັດໃຫ້ທຸກຝ່າຍຮ່ວມແຮງຮ່ວມໃຈສາມັກຄີເຮັດໃຫ້ການກໍ່ສ້າງເຂື່ອນໄຟຟ້ານ້ຳງື່ມໜຶ່ງສຳເລັດໃນ ປີ 1971. ໂດຍການສະໜັບສະໜູນຈາກ ຍີ່ປຸ່ນ(ທຶນODA), ສະຫະລັດອາເມລິກາ, ໂຮແລນ, ການາດາ, ອົດສະຕາລີ, ເດນມາກແລະອື່ນໆ. ໃນເວລານັ້ນປະເທດລາວຍັງບໍ່ມີອຸດສາຫະກຳພາຍໃນປະເທດ, ເຂື່ອນນ້ຳງື່ມໜຶ່ງ ແມ່ນພື້ນຖານໂຄງລ່າງທີ່ສຳຄັນຫຼາຍໃນການສົ່ງໄຟຟ້າຂາຍໃຫ້ຕ່າງປະເທດເພື່ອສ້າງລາຍຮັບເຂົ້າປະເທດ ແລະ ປະກອບສ່ວນຢ່າງໃຫຍ່ຫຼວງຕໍ່ການພັດທະນາເສດຖະກິດຂອງລາວ ແລະ ໄດ້ມີການປັບປຸງຂະຫຍາຍຈົນເຖິງປະຈຸບັນ.

## 2. ໂຄງການໄລຍະຂະຫຍາຍໂຕ ຊ່ວງປີ 1980-2000: ການພັດທະນາໂຄງລ່າງພື້ນຖານ ແລະ ການສ້າງລະບົບ

ນັບຕັ້ງແຕ່ ປີ 1986 ປະເທດລາວໄດ້ລິເລີ່ມດຳເນີນນະໂຍບາຍເອີ້ນວ່າ: "ຈິນຕະນາການໃໝ່ (New Thinking)" ຫຼື "ກົນໄກເສດຖະກິດໃໝ່ (New Economic Mechanism)" ໄດ້ເປີດປະເທດສູ່ເສດຖະກິດຕະຫຼາດ,ເພື່ອສົ່ງເສີມເປົ້າໝາຍດັ່ງກ່າວຍີ່ປຸ່ນໄດ້ເພີ່ມການຊ່ວຍເຫຼືອ ທຶນ ODA ຕໍ່ ປະເທດລາວເພື່ອສະໜັບສະໜູນຄວາມພະຍາຍາມໃນການພັດທະນາປະເທດ.

❖ **ຕົວຢ່າງໂຄງການສຳຄັນໃນໄລຍະນີ້**

**-ໂຄງການພັດທະນາໂຄງລ່າງພື້ນຖານ:** ປະເທດລາວບໍ່ມີທາງອອກສູ່ທະເລຈຶ່ງມີຂໍ້ຈຳກັດດ້ານພູມສັນຖານ ແລະ ຖະໜົນຫົນທາງຫຼາຍບ່ອນຍັງບໍ່ທັນໄດ້ພັດທະນາ ຈຶ່ງພົບຂໍ້ຫຍຸ້ງຍາກໃນການຂົນສົ່ງການພັດທະນາດ້ານຄົມມະນາຄົມເຂົ້າເຖິງເຂດຊົນນະບົດເພື່ອເຊື່ອມໂຍງກັບຕະຫຼາດພາຍໃນແລະພາຍນອກ. ສະນັ້ນ,



ຮູບແລວທາງເສດຖະກິດຕາເວັນຕົກ-ຕາເວັນອອກ (EWECs)

ຕັ້ງແຕ່ທ້າຍປີ1980 ຍີ່ປຸ່ນຈຶ່ງໄດ້ໃຫ້ການຊ່ວຍເຫຼືອສ້າງໂຄງລ່າງພື້ນຖານເຊັ່ນ: ການຟື້ນຟູຖະໜົນຫົນທາງ, ການປັບປຸງ-ຮັກສາທາງຫຼວງເລກ 9 ແລະ 13, ສ້າງທາງແລວຂ້າມຊາຍແດນ ແລະ ຂົວຂ້າມແມ່ນໍ້າ ເພື່ອການເຊື່ອມຕໍ່. ຂົວມິດຕະພາບ ລາວ-ໄທ ແຫ່ງທີ2 ໄດ້ຮັບການຊ່ວຍເຫຼືອແບບທະວີພາຄີ ຈາກຍີ່ປຸ່ນເພື່ອເຊື່ອມຕໍ່ລະຫວ່າງແຂວງສະຫວັນນະເຂດປະເທດລາວກັບ ແຂວງມຸກດາຫານປະເທດໄທ ການເຊື່ອມຕໍ່ທາງບົກເພື່ອທົດແທນການເພິ່ງພາເຮືອຂ້າມຟາກເພື່ອພັດທະນາໃຫ້ມີປະສິດທິພາບທາງດ້ານການຂົນສົ່ງ ແລະການກະຈາຍສິນຄ້າ ຕາມເສັ້ນທາງ East West Economic Corridor. ນອກຈາກນັ້ນ, ມີໂຄງການປັບປຸງສະໜາມບິນສາກົນວັດໄຕ. ສະໜາມບິນດັ່ງກ່າວນີ້ເປັນພື້ນຖານໂຄງລ່າງສຳຄັນທີ່ເອື້ອອຳນວຍຄວາມສະດວກໃນການເດີນທາງຂອງປະຊາຊົນທັງຄົນລາວ ແລະ ຄົນຕ່າງປະເທດໃນການທ່ອງທ່ຽວ, ທຸລະກິດ ເຊິ່ງການຊ່ວຍເຫຼືອຂອງຍີ່ປຸ່ນໄດ້ມີບົດບາດສຳຄັນໃນດ້ານການປັບປຸງ ແລະ ບຳລຸງຮັກສາ ພື້ນຖານໂຄງລ່າງຂອງສະໜາມບິນກາຍເປັນສະໜາມບິນສາກົນໃໝ່ເຊັ່ນ: ການປັບປຸງການເຂົ້າເມືອງ (CIQ), ການໄຫຼວຽນຂອງຜູ້ໂດຍສານກາຍເປັນສິ່ງເອື້ອອຳນວຍຄວາມສະດວກໃນການລໍຖ້າ ການບໍລິການ ແລະ ອື່ນໆ ການຂະຫຍາຍອາຄານຜູ້ ໂດຍສານ ແລະ ການສ້ອມແປງທາງຂັບເຮືອບິນແລະ ບ່ອນຈອດລົດ ເຊິ່ງທັງໝົດນັ້ນ ເພື່ອປະກອບສ່ວນເຂົ້າໃນການເຊື່ອມຕໍ່ກັບພາກພື້ນ, ສາກົນ ແລະ ສ້າງພື້ນຖານໃຫ້ແກ່ການ ເຄື່ອນໄຫວກິດຈະກຳທາງເສດຖະກິດ.

**-ໂຄງການພັດທະນາຊັບພະຍາກອນມະນຸດ:** ການພັດທະນາບຸກຄະລາກອນລັດ ແລະ ພາກເອກະຊົນ.

1) ການພັດທະນາພະນັກງານລັດ (ຜູ້ນຳ ດ້ານນະໂຍບາຍ ແລະ ການບໍລິຫານ): ໂຄງການທຶນການສຶກສາຍີ່ປຸ່ນ (JDS) ເປັນໂຄງການຊ່ວຍເຫຼືອລ້າ. ໂຄງການດັ່ງກ່າວໄດ້ສະໜັບສະໜູນພະນັກງານລັດ ທີ່ມີທ່າແຮງໂດຍໃຫ້ທຶນການສຶກສາລະດັບປະລິນຍາໂທ ຫຼື ປະລິນຍາເອກ ຢູ່ມະຫາວິທະຍາໄລໃນປະເທດຍີ່ປຸ່ນ. ໂຄງການ JDS ໄດ້ເປີດໃນ ປີ 1999 ສຳລັບພະນັກງານລັດຜູ້ທີ່ມີບົດບາດສຳຄັນໃນການສ້າງ ແລະ ຈັດຕັ້ງປະຕິບັດນະໂຍບາຍ. ທຶນການສຶກສານີ້ບໍ່ພຽງແຕ່ສ້າງຄວາມສາມາດຂອງບຸກຄົນເທົ່ານັ້ນແຕ່ຍັງປະກອບສ່ວນເພື່ອສົ່ງເສີມຄວາມເຂັ້ມແຂງ ສາຍພົວພັນ ແລະ ມິດຕະພາບລາວ-ຍີ່ປຸ່ນ.

2)ການພັດທະນາຊັບພະຍາກອນມະນຸດພາກເອກະຊົນ:

-ນອກຈາກພະນັກງານລັດແລ້ວ ການສົ່ງເສີມການສຶກສາພາກເອກະຊົນເຊັ່ນ ນັກທຸລະກິດ, ຜູ້ບໍລິຫານຂອງບໍລິສັດ, ພະນັກງານບໍລິສັດຂະໜາດນ້ອຍ ແລະ ກາງ ແລະ ອື່ນໆ ແມ່ນສິ່ງສຳຄັນເພາະເປັນກຸນແຈທີ່ສຳຄັນຕໍ່ການເຕີບໂຕຂອງເສດຖະກິດ. ອົງການ JICA ໄດ້ສ້າງຕັ້ງ ສູນລາວ-ຍີ່ປຸ່ນ ທີ່ມະຫາວິທະຍາໄລແຫ່ງຊາດລາວໃນປີ 2000, ເຊິ່ງເປັນສູນຝຶກອົບຮົມສົ່ງເສີມໃນການພັດທະນາຊັບພະຍາກອນມະນຸດທາງທຸລະກິດ ແລະ ສ້າງເຄືອຂ່າຍ ຜູ້ປະກອບການ ນັກທຸລະກິດລະຫວ່າງ ລາວ ແລະ ຍີ່ປຸ່ນ. ໂດຍເນັ້ນເປັນສູນກາງການ

ສົ່ງເສີມຄວາມສາມາດໃນການບໍລິຫານ, ທັກສະການປະຕິບັດຕົວຈິງ ແລະ ການສ້າງພື້ນຖານສຳລັບການຮ່ວມມືທາງທຸລະກິດກັບຍີ່ປຸ່ນ. ອົງການ JICA ຍັງໄດ້ໃຫ້ການຊ່ວຍເຫຼືອສ້າງຕັ້ງຄະນະເສດຖະສາດ-ບໍລິຫານທຸລະກິດ ຢູ່ມະຫາວິທະຍາໄລແຫ່ງຊາດໃນປີ 2001 ໂດຍໄດ້ສົ່ງ ຊ່ຽວຊານ ນັກວິຊາການ ອາຈານມາຊ່ວຍພັດທະນາປັບປຸງຫຼັກສູດ ແລະ ປຶ້ມຕຳລາທີ່ໃຊ້ໃນການຮຽນ-ການສອນ ໃນສາຂາວິຊາການລົງທຶນ, ການຕະລາດລະຫວ່າງປະເທດ, ປະຫວັດສາດ, ເສດຖະ ສາດ ແລະ ການເງິນ ລວມທັງການສ້າງຄວາມສາມາດໃຫ້ກັບ ຄູ ອາຈານ ນັກວິຊາການຮຸ່ນໃໝ່ ເພື່ອພັດທະນາຕໍ່ໄປ.

-ການຫັນປ່ຽນໄປສູ່ເສດຖະກິດຕະຫຼາດ ແລະ ການຂະຫຍາຍຕົວຂອງການລົງທຶນຈາກຕ່າງປະເທດຈຳເປັນຕ້ອງໄດ້ຮັບພັດທະນາລະບົບກົດໝາຍການລົງທຶນເພື່ອຮັບປະກັນໃນການແກ້ໄຂຂໍ້ຂັດແຍ່ງໃຫ້ໄດ້ຮັບການຍຸດຕິທຳ ແລະ ພ້ອມທັງຍົກບົດ ບາດຂອງຂັ້ນຕອນການບໍລິຫານມີຄວາມໂປ່ງໃສ. ຍ້ອນເຫັນໄດ້ຄວາມຈຳເປັນຄືແນວນັ້ນ ຍີ່ປຸ່ນໄດ້ໃຫ້ ການສະໜັບສະໜູນໃນການພັດທະນາລະບົບກົດ ໝາຍ ແລະ ລະບຽບການ (ການສະໜັບສະໜູນຮ່າງ), ການຈັດຕັ້ງປະຕິບັດລະບົບ (ກົດລະບຽບ ແລະ ຂັ້ນຕອນການດຳເນີນງານ) ແລະ ການພັດທະນາຊັບພະ ຍາກອນມະນຸດ (ການຝຶກອົບຮົມ ແລະ ອຸປະກອນການສຶກສາ) ລວມທັງການປະຕິຮູບລະບົບກົດໝາຍ ແລະ ຕຸລາການ ໃຫ້ແກ່ບັນດາປະເທດອາຊີລວມທັງປະ ເທດລາວເຮົາ.

-ການຊ່ວຍເຫຼືອຂະແໜງການສຶກສາ ແລະ ສາທາລະນະສຸກ ຂອງລາວໄດ້ມີບົດບາດສຳຄັນໃນການສະໜັບສະໜູນຄຸນນະພາບຊີວິດຂອງປະຊາຊົນ ແລະ ເປັນພື້ນຖານໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມໃນໄລຍະຜ່ານມາ ແລະ ໄດ້ປັບປຸງການເຂົ້າເຖິງການບໍລິການທາງສັງຄົມ, ພື້ນຖານໂຄງລ່າງໃນຂະແໜງ ການສຶກສາ, ການຝຶກອົບຮົມຄູ, ການສະໜອງອຸປະ ກອນການສຶກສາ, ການສົ່ງເສີມການລົງທະບຽນຮຽນ (ໂດຍສະເພາະສຳລັບເດັກນ້ອຍຍິງ ແລະ ເດັກນ້ອຍຊົນ ເຜົ່າ) ທີ່ຢູ່ໃນເຂດຊົນນະບົດ ແລະ ພູດອຍ. ບໍ່ພຽງແຕ່ການປັບປຸງລະບົບການສຶກສາ ແລະ ຄວາມສາມາດທາງວິຊາການຂັ້ນພື້ນຖານເທົ່ານັ້ນ, ແຕ່ຍັງເພີ່ມທາງເລືອກໃນການສຶກສາຕໍ່ ແລະ ເຮັດວຽກ. ນອກຈາກນັ້ນ, ການປັບປຸງຄຸນນະພາບການສຶກສາຍັງສົ່ງເສີມຄວາມເຂົ້າໃຈກ່ຽວກັບຄວາມຮູ້ດ້ານສຸຂະພາບ ແລະ ການປ່ຽນແປງພຶດຕິກຳ ເຊັ່ນ: ຄວາມສຳຄັນຂອງການລ້າງມື, ໂພຊະນາການ ແລະ ການສັກຢາວັກຊີນ.

**3. ໄລຍະພັດທະນາຊ່ວງປີ 2000-2020**

**3.1 ການປ່ຽນແປງທາງເສດຖະກິດ ແລະ ການສ້າງລະບົບກົດໝາຍ**

ອົງການ JICA ໄດ້ໃຫ້ການສະໜັບສະໜູນຢ່າງຕໍ່ເນື່ອງໂດຍຜ່ານການສົ່ງຜູ້ຊ່ຽວຊານ ແລະ ໃຫ້ຄຳປຶກສາໃນໄລຍະຍາວເຊັ່ນ ການຝຶກອົບຮົມໃຫ້ເຈົ້າໜ້າທີ່ຜູ້ບໍລິຫານ, ຜູ້ພິພາກສາ ແລະ ທະນາຍຄວາມ, ປັບປຸງການປະຕິບັດການດຳເນີນຄະດີ ແລະ ການຮອບຮອມເອກະສານ ການ ປັບປຸງກົດໝາຍທີ່ກ່ຽວຂ້ອງ. ການຮ່າງ ແລະ ການປະມວນກົດໝາຍແພ່ງ ໄດ້ຮັບການອະນຸມັດຈາກສະພາແຫ່ງຊາດໃນ 2018 ແລະ ຕໍ່ມາໄດ້ມີຜົນບັງຄັບໃຊ້ໃນ ວັນທີ 27 ພຶດສະພາ 2020. ການປະມວນກົດໝາຍແພ່ງແມ່ນມີຄວາມສຳຄັນໄດ້ກາຍເປັນພື້ນຖານທີ່ສຳຄັນສຳລັບການດຳເນີນທຸລະກິດໃຫ້ມີຄວາມຊັດເຈນຂຶ້ນເຊັ່ນ: ການຄຸ້ມຄອງສັນຍາ, ການປ້ອງກັນ ແລະ ແກ້ໄຂຂໍ້ຂັດແຍ່ງ. ດັ່ງນັ້ນ, ຈຶ່ງກາຍເປັນການປົກປ້ອງສິດທິຂອງພົນລະເຮືອນເຮັດໃຫ້ມີຄວາມສະຖຽນລະພາບທາງດ້ານການຄ້າ ແລະ ເຮັດໃຫ້ສະ

ພາບແວດລ້ອມການດຳເນີນທຸລະກິດການລົງທຶນດີຂຶ້ນ.

### 3.2 ພາລະບົດບາດອາສາສະໝັກຍີ່ປຸ່ນ (JOCV)

ປະເທດລາວເປັນປະເທດທຳອິດທີ່ໄດ້ຮັບ "ອາສາສະໝັກຮ່ວມມືຕ່າງປະເທດຂອງຍີ່ປຸ່ນ (青年海外協力隊, Japan Overseas Cooperation Volunteers (JOCV))" ໃນປີ 1965, ຈຳນວນ 5 ທ່ານ ນັບຕັ້ງແຕ່ນັ້ນມາໂຄງການດັ່ງກ່າວໄດ້ມີສ່ວນຮ່ວມຢ່າງເລິກເຊິ່ງໃນການພັດທະນາຊັບພະຍາກອນມະນຸດໃນລະດັບຂັ້ນຕົ້ນທີ່ສາມາດແກ້ໄຂບັນຫາດ້ານວິຊາການດ້ານກະສິ



ອາສາສະໝັກຄວາມຮ່ວມມືໃນຕ່າງປະເທດ (JOCV) ໃນປີ 1965

ກຳແລະອື່ນໆ ຢູ່ທ້ອງຖິ່ນ. ແຕ່ຍ້ອນການປ່ຽນແປງທາງດ້ານການ ເມືອງຂອງພາກພື້ນກໍຄືຢູ່ພາຍໃນລາວເອງຈຶ່ງໄດ້ຢຸດໄປໄລຍະໜຶ່ງ ຈົນມາຮອດປີ 1990 ຈຶ່ງໄດ້ສືບຕໍ່ຈັດສົ່ງອາສາສະໝັກເພື່ອມາຊ່ວຍວຽກ ເຮັດວຽກຈົນເຖິງປະ ຈຸບັນ. ອະສາສະໝັກ JOCV ເຮັດວຽກຢູ່ປະ ເທດລາວໄລຍະ 2 ປີ ຢູ່ອີງການລັດແຕ່ສູນກາງຮອດທ້ອງ ຖິ່ນ, ກວມເອົາຫຼາຍຂົງເຂດເຊັ່ນ: ການສຶກສາ, ການດູແລສຸຂະພາບ, ກະສິກຳ, ການພັດທະນາຊຸມຊົນ, ກິລາ, ກິດຈະກຳຊາວໜຸ່ມ, ICT ແລະ ສິ່ງແວດລ້ອມ.ຕົວຢ່າງໃນຂະແໜງການສຶກສາພວກເຂົາເຈົ້າໄດ້ໃຫ້ການສະໜັບສະໜູນການຮຽນວິທະຍາສາດ ແລະ ຄະນິດສາດ, ການສຶກສາທາງດ້ານຮ່າງກາຍ ແລະ ການຝຶກອົບຮົມວິຊາຊີບ ແລະ ຍັງພັດທະນາອຸປະກອນການສອນ. ໃນຂະແໜງສາທາລະນະສຸກ ພວກເຂົາຊ່ວຍເພີ່ມຄວາມຮັບຮູ້ກ່ຽວກັບສຸຂະພາບ ແລະ ປັບປຸງການບໍລິການສຸຂະພາບຂັ້ນພື້ນຖານ. ອາສາສະໝັກເຫຼົ່ານີ້ໃຫ້ວິທີການທີ່ຄົບຖ້ວນ ແລະ "ຄຽງຄູ່ກັນ" ທີ່ ເໝາະສົມກັບສະພາບແຕ່ລະທ້ອງຖິ່ນ ມາຮອດປະຈຸບັນເປັນໄລຍະເວລາ 60 ປີ ແລະ ຈຳນວນອາສາສະໝັກຫຼາຍກວ່າ 1,000 ຄົນ ໄດ້ຖ່າຍທອດຄວາມຮູ້ຄວາມສາມາດໃນດ້ານຂະແໜ່ງຕ່າງໆ ນັບແຕ່ສູນກາງຮອດເຂດຫ່າງໄກສອກຫຼີກເພື່ອປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງລາວ.

### 3.3 ການຊ່ວຍເຫຼືອພັດທະນາເສດຖະກິດ

ໂຄງການອະນຸພາກພື້ນແມ່ນ້ຳຂອງຫຼື GMS ແມ່ນສະໜັບສະໜູນ "ການເຕີບໂຕຂ້າມຊາຍແດນ" ເປັນໂຄງການຮ່ວມມືກັບພາກພື້ນທີ່ເປີດຕົວໃນປີ 1992 ໂດຍໄດ້ຮັບການສະໜັບສະໜູນຈາກທະນາຄານພັດທະນາອາຊີ (ADB). ລັກສະນະຂອງໂຄງການແມ່ນການພັດທະນາແບບປະສົມປະສານ ຂອງການຂົນສົ່ງ, ພະລັງງານ, ການອຳນວຍຄວາມສະດວກດ້ານການຄ້າ, ການທ່ອງທ່ຽວ ແລະ ນອກຈາກນັ້ນຍັງໄດ້ສົ່ງເສີມການຄ້າ ຂ້າມຊາຍແດນເຊັ່ນ: ການພັດທະນາ "ແລວທາງເສດຖະກິດ" ແລວທາງເສດຖະກິດເໜືອ-ໃຕ້ (NSEC), ແລວທາງເສດຖະກິດຕາເວັນອອກ-ຕາເວັນຕົກ (EWEC) ແລະ ແລວທາງເສດຖະກິດໃຕ້ (SEC), ການສະໜັບສະໜູນຍຸດທະສາດຂອງປະເທດໃນການຫັນປ່ຽນຈາກປະເທດ "ທີ່ບໍ່ມີຊາຍແດນຕິດກັບທະເລ" ໄປສູ່ປະເທດ "ທີ່ເຊື່ອມຕໍ່ກັນທາງບົກກັບ CLMV (ກຳປູເຈຍ, ລາວ, ມຽນມ້າ, ຫວຽດນາມ). ສິ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ ເພື່ອສົ່ງເສີມການເຕີບໂຕ

ຂອງກຸ່ມອຸດສາຫະກຳ ແລະ ການພັດທະນາຊັບພະຍາກອນມະນຸດທີ່ເອື້ອອຳນວຍສະພາບແວດລ້ອມໃຫ້ສະດວກແກ່ການຈັດຊື້, ການຜະລິດ ແລະ ການສົ່ງອອກໃນພາກພື້ນ ຜ່ານການພັດທະນາຖະໜົນຫົນທາງ ຂົວ ແລະ ດ່ານຊາຍແດນ ພ້ອມທັງການແຈ້ງພາສີໃຫ້ວ່ອງໄວຂຶ້ນ. ໂດຍນຳໃຊ້ຄວາມສະດວກດ້ານການຂົນສົ່ງເພື່ອດຶງດູດອຸດສາຫະກຳເຊັ່ນ: ສິ້ນສ່ວນເອເລັກໂຕຣນິກ, ການປຸງແຕ່ງກະສິກຳ, ການເກັບຮັກສາສິນຄ້າ ແລະ ການແຈກຢາຍ. ນອກຈາກນັ້ນ, ຄວາມສາມາດໃນການຍົກລະດັບມາດຕະຖານດ້ານສິ່ງແວດລ້ອມໃຫ້ມີປະສິດທິພາບໃນການດຶງດູດການລົງທຶນແບບຍືນຍົງ. ໄດ້ສະໜອງທັກສະທີ່ຈຳເປັນໃນສະໜາມເຮັດວຽກ ເຊັ່ນ: ການເຊື່ອມໂລຫະ, ວິສະວະກຳໄຟຟ້າ, ການບຳລຸງຮັກສາກົນຈັກ, ການຄວບຄຸມຄຸນນະພາບ, ການຄຸ້ມຄອງການຂົນສົ່ງ, ແລະ IT ຂັ້ນພື້ນຖານ, ຜ່ານການສ້າງຕັ້ງໂຮງຮຽນຝຶກອົບຮົມວິຊາຊີບ, ການປັບປຸງຫຼັກສູດ,ການຝຶກອົບຮົມຄູສອນ, ການສະໜອງອຸປະກອນ ແລະ ການຝຶກງານຂອງພະນັກງານບໍລິສັດ. ນອກຈາກນັ້ນ, ຍັງສົ່ງເສີມທຶນການສຶກສາ ແລະ ການຈັດຕະຫຼາດຈັບຄູ່ເຮັດວຽກເພື່ອຊຸກຍູ້ການມີສ່ວນຮ່ວມຂອງແມ່ຍິງ, ຊາວໜຸ່ມ ແລະ ປະຊາຊົນຈາກເຂດຊົນນະບົດເພື່ອຂະຫຍາຍການຈ້າງງານ ແລະ ຫຼຸດຜ່ອນຄວາມແຕກຕ່າງ. ໂດຍລວມແລ້ວ ເພື່ອສ້າງສະພາບແວດລ້ອມການລົງທຶນ,ສະໜັບໜູນສ້າງໂອກາດໃຫ້ບໍລິສັດຕ່າງໆ ມາເຕົ້າໂຮມກັນ ຝຶກອົບຮົມວິຊາຊີບ ເພື່ອສົ່ງເສີມການພັດທະນາຊັບພະຍາ ກອນມະນຸດ ແລະ ສົ່ງເສີມການລົງທຶນ.

## 4. ການພົວພັນຮ່ວມມືໃນໄລຍະໃໝ່ ຊ່ວງປີ 2020-2025

### 4.1 ການຍົກລະດັບຄວາມສຳພັນ

ໃນເດືອນມັງກອນ 2025 ນາຍົກລັດຖະມົນຕີລາວ ທ່ານ ສອນໄຊ ສີພັນດອນ ໄດ້ໄປຢ້ຽມຢາມປະເທດຍີ່ປຸ່ນຢ່າງເປັນທາງການໄດ້ ພົບປະປຶກສາຫາລືກັບນາຍົກລັດຖະມົນຕີ ທ່ານ ອິຊິບະ ໄດ້ຕົກລົງວ່າ ສາຍພົວພັນຂອງສອງປະເທດຈະຖືກຍົກລະດັບເປັນ "ການຮ່ວມມືຍຸດທະສາດຮອບດ້ານ" ການຮ່ວມມືຂະຫຍາຍໄປສູ່ຄວາມໝັ້ນຄົງ, ພະລັງງານສີຂຽວ, ດີຈີຕອນ ແລະ ການຮັບມືການປ່ຽນແປງດິນຟ້າອາກາດ.

### 4.2 ບາງຂະແໜງການໃນການຮ່ວມມື

① ໂຄງລ່າງພື້ນຖານ ແລະ ການຂົນສົ່ງ

ເພື່ອເສີມສ້າງພື້ນຖານໂຄງລ່າງ "ທີ່ເຊື່ອມຕໍ່ກັນທາງບົກ" ຂອງອາຊຽນ ການສະໜັບສະໜູນໄດ້ໃຫ້ການຊ່ວຍເຫຼືອ ຕາມທ່າແຮງ (ການສ້ອມແປງຖະໜົນຫົນທາງ ແລະ ຂົວ) ແລະ ດ້ານຄົງຄ້າງ (ການຫັນເປັນດີຈີຕອນຂອງພາສີ ແລະ ປະສິດທິພາບການຂົນສົ່ງ). ໂດຍສະເພາະ ບຸລິມະສິດໄດ້ຖືກວາງໄວ້ໃນການປັບປຸງຄຸນນະພາບຂອງແລວເສດຖະກິດຕາເວັນອອກ-ຕາເວັນຕົກ.

1) ຈາກການລະບາດຂອງພະຍາດໂຄວິດ 19 ແລະ ບັນຫາເສດຖະກິດມະຫາພາກ ນັບຕັ້ງແຕ່ປີ 2020, ປະເທດລາວໄດ້ຮັບຜົນກະທົບຕໍ່ການທ່ອງທ່ຽວ ແລະ ການຂົນສົ່ງ. ຈຸດເນັ້ນໜັກຂອງການຮ່ວມມືໄດ້ປ່ຽນຈາກ "ປະລິມານ" ໄປສູ່ "ຄຸນນະພາບແລະຄວາມຍືນຍົງ"ລວມທັງຄວາມສາມາດໃນດ້ານການຄຸ້ມຄອງ, ໂຄງລ່າງ ທາງເສດຖະກິດ-ສັງຄົມ ເຊັ່ນ: ການຂົນສົ່ງ

ການສື່ສານ ສຸຂາພິບານ ການສຶກສາ ແລະ ພະລັງງານ.
2) ການພັດທະນາການຮ່ວມມື "ຍຸດທະສາດ" ຈາກການເຊື່ອມຕໍ່ໄປສູ່ "ການເຕີບໂຕທີ່ມີຄຸນນະພາບ" ຮ່ວມກັບແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ຄັ້ງທີ 9 (2021-2025), ແຜນການດໍາເນີນວຽກ ເພື່ອສົ່ງເສີມການຮ່ວມມືຍຸດທະສາດລະຫວ່າງ ລາວ ແລະ ຍີ່ປຸ່ນ, ໂດຍເນັ້ນໜັກ ການເຕີບໂຕທາງເສດຖະກິດ ແລະ ລວມທັງພື້ນຖານໂຄງລ່າງເຊັ່ນ: ການຂົນສົ່ງ, ລະບົບ ແລະ ຊັບພະຍາກອນມະນຸດ. ນອກນັ້ນ, ຍັງໃຫ້ຄວາມສໍາຄັນກັບ ການເຊື່ອມຕໍ່ການດໍາເນີນວຽກ ການປັບປຸງປະສິດທິພາບ ການບໍາລຸງຮັກສາໂດຍຜ່ານການນໍາໃຊ້ ICT, ການພັດທະນາຊັບພະຍາກອນມະ ນຸດ ແລະ ການເຊື່ອມໂຍງສິ່ງອໍານວຍຄວາມສະ ດວກຕ່າງໆ.

**② ພະລັງງານສີຂຽວ ແລະ ກະສິກໍາ**

1) ພະລັງງານສີຂຽວ ການຫຼຸດຜ່ອນການປ່ອຍກາບອນ ແລະ ຂະແໜງພະລັງງານຂັ້ນສູງ ໃນຊຸມປີມໍ່ໆມານີ້ໄດ້ຂະຫຍາຍການຮ່ວມມືເຊັ່ນ: ພະລັງງານທົດແທນ, ພະລັງງານສີຂຽວ, ພື້ນຖານໂຄງລ່າງ ແລະ ການປ້ອງກັນໄພພິບັດ. ນອກຈາກນັ້ນ, ການຮ່ວມມື ລຸ່ມແມ່ນໍ້າຂອງ ແລະ ຍີ່ປຸ່ນ ເພື່ອສະໜັບສະໜູນການພັດທະນາລະບຽບການ ແລະ ມາດຕະຖານດ້ານວິຊາການສໍາລັບພະລັງງານທົດແທນທີ່ປ່ຽນແປງໄດ້ເຊັ່ນ: ພະລັງງານແສງຕາເວັນ ແລະ ພະລັງງານລົມ ການພັດທະນາລະບົບ ການກວດກາ ແລະ ການດໍາເນີນງານເປັນສິ່ງສໍາຄັນ.

2) ກິຈິຕອນ (ການບໍລິຫານ, ການຂົນສົ່ງ ແລະ ການບໍາລຸງຮັກສາ): ເພື່ອຫຼີກລ່ຽງການກໍ່ສ້າງຂະຫຍາຍຖະໜົນຫົນທາງ ແລະ ເພີ່ມການບໍລິການໃນຕົວເມືອງ, ນະໂຍບາຍໄດ້ຖືກຮັບຮອງເອົາເພື່ອນໍາໃຊ້ ICT ເຂົ້າໃນການຄຸ້ມຄອງການບໍາລຸງຮັກສາ ແລະ ການບໍລິຫານຂັ້ນສູງ.ນີ້ແມ່ນຂົງເຂດໃໝ່ທີ່ຈະນໍາໄປສູ່ການຂົນສົ່ງ ແລະ ຂັ້ນຕອນຕ່າງໆ ຢູ່ຊາຍແດນໃຫ້ມີປະສິດ ທິພາບຫຼາຍ.

3) ການປ້ອງກັນໄພພິບັດ ແລະ ບັນຫາຕົວເມືອງ (ການຕອບສະໜອງຕໍ່ຜົນກະທົບການປ່ຽນແປງດິນຟ້າອາກາດ) ການຮ່ວມມືດ້ານພື້ນຖານໂຄງລ່າງໄດ້ເຊື່ອມໂຍງກັບການປ້ອງກັນໄພພິບັດ ແລະ ບັນຫາຂອງຕົວເມືອງ (ການຂົນສົ່ງ, ການລະບາຍນໍ້າ, ສຸຂາພິບານ) ເພາະສິ່ງເຫຼົ່ານີ້ມີຜົນກະທົບຕໍ່ການທ່ອງທ່ຽວ ແລະ ສະຖານທີ່ອຸດສາຫະກໍາ.

**③ ການສຶກສາ ແລະ ພັດທະນາຊັບພະຍາກອນມະນຸດ**

ເພື່ອສະໜັບສະໜູນສົ່ງເສີມການສຶກສາພາກເອກະຊົນເຊັ່ນ ນັກທຸລະກິດ, ຜູ້ປະກອບການ, ຜູ້ບໍລິຫານຂອງບໍລິສັດ, ພະນັກງານບໍລິສັດຂະໜາດນ້ອຍ ແລະ ກາງ ແມ່ນເປັນສິ່ງສໍາຄັນເພື່ອພັດທະນາຊັບພະຍາກອນມະນຸດທາງດ້ານການບໍລິຫານທຸລະກິດ ໃຫ້ມີຄວາມສາມາດເຂົ້າໃນການສົ່ງເສີມການພັດທະນາເສດຖະກິດຕະຫຼາດ. ໂຄງການ JICA ໄດ້ສືບຕໍ່ສະໜັບສະໜູນດ້ານເຕັກນິກ ໂດຍໄດ້ສົ່ງຊ່ຽວຊານ ວິຊາການ ອາຈານສອນ ຊ່ວຍສອນໃນຫຼັກສູດການຮຽນ-ການສອນຂອງສະຖາບັນ ລາວ-ຍີ່ປຸ່ນ (LJI) ເຊິ່ງມີຫຼັກສູດທີ່ສໍາຄັນເຊັ່ນ:

-ຫຼັກສູດປະລິນຍາໂທສາຂາບໍລິຫານທຸລະກິດ(MBA) ເປັນຫຼັກສູດທີ່ມີຄວາມສົມດຸນລະຫວ່າງຄວາມຮູ້ທາງທິດສະດີ ແລະ ການປະຕິບັດຕົວຈິງການບໍລິຫານທຸລະກິດແບບສາກົນ, ແບບຍີ່ປຸ່ນເຊິ່ງສອນໂດຍອາຈານຜູ້ທີ່ມີປະສົບການສູງທັງຄົນລາວ, ຄົນຍີ່ປຸ່ນ ແລະ ອາຈານຕ່າງປະເທດ. ນອກຈາກການສຶກສາໃນຫ້ອງຮຽນແລ້ວ, ທາງໂຄງການ JICA ຍັງໄດ້ໃຫ້ການສະໜັບສະໜູນນັກສຶກສາໄປຢ້ຽມຢາມທັດສະ ນະສຶກສາບໍລິສັດຕ່າງໆ ໃນລາວ ແລະ ຕ່າງປະເທດ.

ແລະ ຍັງມີການຈັດກິດຈະກຳສົ່ງເສີມເຄືອຂ່າຍອະດີດນັກສຶກສາມາຮອດປັດຈຸບັນມີນັກສຶກສາຮຽນຈົບຫຼາຍກວ່າ 400 ຄົນ.

- ຫຼັກສູດ Keiei-Juku ເຊິ່ງເປັນຫຼັກສູດສຳລັບຜູ້ບໍລິຫານລະດັບສູງ ເພື່ອສົ່ງເສີມການຮຽນຮູ້ ແລະ ພັດທະ ນາດ້ວຍຕົນເອງ ເພື່ອແລກປ່ຽນປະສົບການ ແລະ ເຂົ້າຮ່ວມເຄືອຂ່າຍທຸລະກິດ. ໄລຍະຮຽນ 6 ເດືອນ ວິຊາຮຽນຕ່າງໆ ເຊັ່ນ ຍຸດທະສາດທຸລະກິດ, ຍຸດທະສາດການຄຸ້ມຄອງຊັບພະຍາກອນມະນຸດ, ຍຸດທະສາດການຕະຫຼາດແລະອື່ນໆ ນອກນັ້ນ, ນັກສຶກສາຍັງສາມາດປຶກສາຫາລືໂດຍກົງກັບອາຈານສອນ ແລະ ຍັງໄດ້ໄປທັດສະນະສຶກສາ ໃນປະເທດຍີ່ປຸ່ນເພື່ອຮຽນຮູ້ການປະຕິບັດ ການຄຸ້ມຄອງຂອງບໍລິສັດຍີ່ປຸ່ນຢູ່ໃນສະຖານທີ່ຈິງ ແລະ ຮຽນຮູ້ແນວໂນ້ມທາງທຸລະກິດຈາກບໍລິສັດຍີ່ປຸ່ນ. ນອກຈາກນີ້, ມີການສົ່ງເສີມທຸລະກິດໃໝ່ຄື: ໂຄງການ LJI SUSU ສ້າງເຄືອຂ່າຍການແລກປ່ຽນກັບນັກທຸລິກິດລາວ, ຍີ່ ປຸ່ນ ແລະ ກັບບັນດາປະເທດໃນພາກພື້ນ ເພື່ອສະໜັບສະໜູນບໍລິສັດເອກະຊົນ ແລະ ການເຕີບໂຕຂອງອຸດສາຫະກຳໃນລາວ.

**ສະຫຼຸບ:**

ການຮ່ວມມືລະຫວ່າງ ລາວ ແລະ ຍີ່ປຸ່ນ ຕະຫຼອດໄລຍະເຈັດທົດສະວັດທີ່ຜ່ານມາໄດ້ຮັບການເສີມຂະຫຍາຍດ້ວຍດີຕະຫຼອດເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນລາວພັດທະນາຫຼາຍຂຶ້ນ. ການສຶກສາ, ວິທະຍາສາດ, ເຕັກໂນໂລຊີ, ນັກວິຊາການ, ນັກຊ່ຽວຊານ, ນັກທຸລະກິດ,ນັກວິສະວະກອນ, ນັກການ ເມືອງໄດ້ຮັບການຍົກລະດັບຢ່າງກວ້າງຂວາງ ແລະ ມີຄຸນນພາບສາມາດຄຸ້ມຄອງບໍລິຫານວຽກງານໄດ້ດີຂຶ້ນແລະ ພ້ອມທັງເຮັດໃຫ້ບົດບາດຂອງ ສປປລາວ ເປັນທີ່ຍອມຮັບຢູ່ໃນເວທີສາກົນແລະພາກພື້ນ, ສາມາດປະກອບສ່ວນອັນໃຫຍ່ຫຼວງໃນການພັດທະນາເສດ ຖະກິດ-ສັງຄົມແຫ່ງຊາດຂອງ ສປປລາວໃນແຕ່ລະໄລຍະ. ສອງປະເທດລາວ-ຍີ່ປຸ່ນ, ຍີ່ປຸ່ນ-ລາວ ເປັນຄູ່ຮ່ວມພັດທະນາທີ່ຕະຫຼອດມາ.


ເອກະສານອ້າງອີງ:

*Embassy of Japan in the Lao PDR. 2012. Japan's ODA to Laos from: http://www.la.embjapan.go.jp/ Japan sodatolaos/ [2012, July 15].*

*Kawashima, N., Kuroda, K., Kitamura, Y. (2022). Japan's International Cooperation in Education: An Overview. In: Kawashima, N., Kuroda, K., Kitamura, Y. (eds) Japan's International Cooperation in Education. Education in the Asia-Pacific Region: Issues, Concerns and Prospects, vol63.Springer,Singapore. https://doi.org/10.1007/978-981-16-6815-9_1*

*Suehiro, A. (1999). The Road to Economic Re-entry: Japan's Policy toward Southeast Asian Development in the 1950s and 1970s. Social Science Japan Journal, 2(1), 85-105.*

*Asian Development Bank. 2009. Available from: http://www.adb.org/Documents/Books/ADO/2009/LAO.pdf [2010, January 10].*

*Delino, Catharin. 2007. The Role of Human Rights: the Case of Burma. in Thomas U. Berger, Mike M. Mochizuki and Jitsuo Tsuchiyama (eds.). Japan in International Politics: the Foreign Policies of an Adaptive State. 2007. Boulder, Colorado: Lynne Rienner.*

*Furuoka, Fumitaka. 2008. The Role of Non-Governmental Organizations (NGOs) in Japan's Foreign Aid Policy from: http://mpra.ub.uni-muenchen.de/7418/1/MPRApaper7418.pdf [2012 15 July 2012].*